ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------------====0000====------------------

ສານປະຊາຊົນແຂວງ ຫຼວງພະບາງ ເລກທີ 012/ສປຊ

ລົງວັນທີ 26 ກໍລະກົດ 2016

# ຄໍາສັ່ງແຕ່ງຕັ້ງຄະນະກໍາມະການລົງກວດກາ

ອີງຕາມກົດໝາຍວ່າດ້ວຍສານປະຊາຊົນແຫ່ງ ສ.ປ.ປ.ລາວ ສະບັບປັບປຸງປີ 2009.

ອີງຕາມມາດຕາ 123 (ປັບປຸງ) ຂອງກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ ສະບັບປັບປຸງປີ 2012.

ອີງຕາມສໍານວນຄະດີ ແພ່ງ ເລກທີ 17/ຂຕພ, ລົງວັນທີ 11 ທັນວາ 2015.

ລະຫວ່າງ

ທ້າວ ເພັດຈໍາພອນ ຂຸນດາລາ ອາຍຸ 52 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ 02, ເຮືອນເລກທີ 22, ບ້ານຊຽງທອງ, ເມືອງຫຼວງພະບາງ ແຂວງຫຼວງພະບາງ.................ໂຈດ.

ນາງ ບຸນທັນ ອາຍຸ 58 ປີ, ສັນຊາດລາວ, ອາຊີບ ຄ້າຂາຍ, ປັດຈຸບັນຢູ່ໜ່ວຍ 05, ເຮືອນເລກທີ 90, ບ້ານສັງຄະໂລກ, ເມືອງຫຼວງພະບາງ ແຂວງຫຼວງພະບາງ..........................................ຈໍາເລີຍ.

ທ້າວ ບຸນທະວີ ຄໍລະຍົກ (ທະນາຍຄວາມຜູ້ຕາງໜ້າໂຈດ).

ກ່ຽວເລື່ອງ: ທວງເອົາເງິນຄືນ

ຜ່ານການຄົ້ນຄວ້າສໍານວນຄະດີເລື່ອງນີ້ ສານປະຊາຊົນແຂວງຫຼວງພະບາງ ເຫັນວ່າມີຄວາມຈໍາເປັນຕ້ອງລົງກວດກາທີ່ດິນ ຕັ້ງຢູ່ບ້ານສັງຄະໂລກ ເມືອງຫຼວງພະບາງ ແຂວງຫຼວງພະບາງ ເພື່ອຮັບປະກັນການຮ້ອງຟ້ອງ.

ດັ່ງນັ້ນ ສານປະຊາຊົນແຂວງຫຼວງພະບາງ ຈຶ່ງໄດ້ອອກຄໍາສັ່ງແຕ່ງຕັ້ງຄະນະກໍາມະການ ຊຶ່ງປະກອບດ້ວຍພາກສ່ວນກ່ຽວຂ້ອງດັ່ງລຸ່ມນີ້:

| | | |
|---|---|---|
| 1 ທ່ານ ສອນນິຄົມ ຄໍາພາສິດ | ຮອງປະທານສານປະຊາຊົນແຂວງ | ຫົວໜ້າ |
| 2 ທ່ານ ພອນປະເສີດ ຈັນທະພອນ | ຜູ້ພິພາກສາ | ຄະນະ |
| 3 ທ່ານ ບຸນທະວີ ສີລັດຕະນະ | ຜູ້ພິພາກສາ | ຄະນະ |
| 4 ທ່ານ ຈັນສະໄໝ ພະລາກອນ | ຜູ້ພິພາກສາ | ຄະນະ |
| 5 ທ່ານ ສອນເພັດ ພັນທະສີນ | ຈ່າສານ | ຄະນະ |
| 6 ທ່ານ ຄໍາມູນ ຮຸ່ງເຮືອງ | ວິຊາການ | ຄະນະ |
| 7 ທ່ານ ນາງ ພອນສະຫວັນ | ວິຊາການໄອຍະການປະຊາຊົນແຂວງ | ຄະນະ |
| 8 ທ່ານ ຄໍາໝັ້ນ | ຫົວໜ້າໜ່ວຍງານແກ້ໄຂຂໍ້ຂັດແຍ່ງກ່ຽວກັບທີ່ດິນແຂວງ | ຄະນະ |
| 9 ທ່ານ ດາລີວອນ ກໍວີວັນ | ວິຊາການທີ່ດິນແຂວງ | ຄະນະ |

| | | |
|---|---|---|
| 10 ທ່ານ ອານຸພາບ | ວິຊາການເຄຫາຜັງເມືອງ | ຄະນະ |
| 11 ທ່ານ ຄຳພັນ ວົງສອນເພັດ | ນາຍບ້ານສັງຄະໂລກ | ຄະນະ |
| 12 ທ່ານ ທຸມພັນ ດາລາວົງ | ຮອງນາຍບ້ານສັງຄະໂລກ | ຄະນະ |

ພາຍຫຼັງສຳເລັດການກວດກາວັດແທກແລ້ວ ໃຫ້ຄະນະກຳມະການສະຫຼຸບຜົນຂອງການກວດກາວັດແທກທີ່ດິນ ຢູ່ບ້ານສັງຄະໂລກ ເມືອງຫຼວງພະບາງ ແຂວງຫຼວງພະບາງ ພາຍໃນກຳນົດ ເຈັດວັນ ຖ້າຫາກບໍ່ສຳເລັດພາຍໃນກຳນົດນີ້ແລ້ວໃຫ້ລາຍງານຕໍ່ສານຊາບ ຕາມກຳນົດເວລາອັນຄວນດ້ວຍ.

ຄຳສັ່ງແຕ່ງຕັ້ງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານສານປະຊາຊົນແຂວງຫຼວງພະບາງ

ໂທບພະກອນ ຜາຜຸ